ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ...208.../ຊກ

ເຊກອງ, ວັນທີ...16/09/2025...

# ຂໍ້ຕົກລົງ

# ວ່າດ້ວຍການຄຸ້ມຄອງ-ນຳໃຊ້

# ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ແຂວງເຊກອງ

- **ອີງຕາມ** ມາດຕາ 20 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ) ສະບັບເລກທີ 75/ສພຊ, ລົງວັນທີ 20 ມີນາ 2025.
- **ອີງຕາມ** ມາດຕາ 41 ຂອງກົດໝາຍ ວ່າດວ້ຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007.
- **ອີງຕາມ** ມາດຕາ 82 ຂອງກົດໝາຍວ່າດ້ວຍສ້າງນິຕິກຳ ສະບັບປັບປຸງປີ 2021 ເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021.
- **ອີງຕາມ** ມະຕິກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາປະຊາຊົນແຂວງ ຊຸດທີ II; ສະບັບເລກທີ 140/ສພຂ.ຊກ; ລົງວັນທີ 23 ກໍລະກົດ 2025.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1

### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ການຈັດຕັ້ງ ການເຄື່ອນໄຫວວຽກງານ ຂອງ ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ແນໃສ່ຈັດຕັ້ງປະຕິບັດການປິ່ນປົວ, ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ການຄຸ້ມຄອງ, ນຳໃຊ້ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.**

ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ແມ່ນສະຖານທີ່ສຳລັບໃຊ້ປິ່ນປົວ, ບຳບັດ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ພາຍໃຕ້ການຄຸ້ມຄອງ ຂອງກອງບັນຊາການ ປກສ ແຂວງ, ຄະນະກຳມະການແກ້ໄຂບັນຫາຢາເສບຕິດຂັ້ນແຂວງ, ຮັບໃຊ້ໃຫ້ແກ່ປະຊາຊົນບັນດາເຜົ່າ ທົ່ວແຂວງເຊກອງ ແລະ ແຂວງໃກ້ຄຽງ.

**ມາດຕາ 3 ອະທິບາຍຄໍາສັບ.**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

- ການຄຸ້ມຄອງ ໝາຍເຖິງ: ຄວາມຮັບຜິດຊອບ ຂອງການຈັດຕັ້ງລັດ ຕໍ່ກັບສູນປິ່ນປົວ ແລະ ຟື້ນຟູສຸພາບຜູ້ຕິດຢາເສບຕິດ;

- ສູນປິ່ນປົວ ໝາຍເຖິງ: ອາຄານສະຖານທີ່ໃຊ້ສໍາລັບປິ່ນປົວຜູ້ຕິດຢາເສບຕິດ;

- ຟື້ນຟູສຸຂະພາບ ໝາຍເຖິງ: ການເຮັດໃຫ້ຜູ້ຕິດຢາເສບຕິດທີ່ມາປິ່ນປົວຢູ່ສູນມີສຸຂະພາບຮ່າງກາຍແຂງແຮງສົມບູນດີ, ມີສຸຂະພາບຈິດໃຈທີ່ແຈ່ມໃສ, ມັນສະໝອງປອດໂປ່ງເປັນປົກກະຕິ ດ້ວຍວິທະຍາສາດການແພດ ແລະ ກາຍະບໍາບັດ.

**ມາດຕາ 4 ນະໂຍບາຍຂອງລັດ.**

ອົງການປົກຄອງແຂວງໄດ້ຊຸກຍູ້, ສົ່ງເສີມ ແລະ ສ້າງທຸກເງື່ອນໄຂໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນແຂວງ ປະກອບສ່ວນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດຢູ່ ແຂວງເຊກອງ ໃຫ້ໝັ້ນຄົງ, ທັນສະໄໝ ຮັບໃຊ້ປະຊາຊົນບັນດາເຜົ່າຢ່າງມີປະສິດທິພາບ.

**ມາດຕາ 5 ຫຼັກການ.**

1) ເຄົາລົບລັດຖະທໍາມະນູນ ແລະ ກົດໝາຍຢ່າງເຂັ້ມງວດ;

2) ນໍາພາ, ຊີ້ນໍາ ແລະ ກວດກາໂດຍຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນແຂວງ;

3) ລວມສູນເປັນເອກະພາບ ໂດຍພື້ນຖານແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານກົມກຽວລະຫວ່າງສູນກາງ ກັບທ້ອງຖິ່ນ;

4) ປະຕິບັດລະບອບຫົວໜ້າດຽວ, ລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ;

5) ຮັກສາຈັນຍາບັນ ຂອງວິຊາສະເພາະໃນກໍາລັງປ້ອງກັນຄວາມສະຫງົບ;

6) ກະທັດຮັດມີປະສິດທິພາບ, ທັນສະໄໝ, ເປີດເຜີຍໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດການນໍາໃຊ້.**

ຂໍ້ຕົກລົງສະບັບນີ້ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ຮັບຜິດຊອບ ໃນການຄຸ້ມຄອງ, ນໍາໃຊ້ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ແຂວງເຊກອງ.

## ໝວດທີ 2

## ທີ່ຕັ້ງ, ພາລະບົດບາດຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ

**ມາດຕາ 7 ທີ່ຕັ້ງ.**

ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ( ຂຽນເປັນຕົວອັກສອນຫຍໍ້ "ສປຟ") ແມ່ນກົງຈັກການຈັດຕັ້ງໜຶ່ງ ທີ່ຂຶ້ນກັບຫ້ອງຕໍາຫຼວດ ກອງບັນຊາການ ປກສ ແຂວງເຊກອງ ຢູ່ພາຍໃຕ້ການນໍາພາ-ຊີ້ນໍາ ໂດຍກົງ ແລະ ຮອບດ້ານ ຂອງຫ້ອງຕໍາຫຼວດ ກອງບັນຊາການ ປກສ ແຂວງເຊກອງ.

**ມາດຕາ 8 ພາລະບົດບາດ.**

ມີພາລະບົດບາດ ເປັນເສນາທິການໃຫ້ຫ້ອງຕຳຫຼວດກອງບັນຊາການປ້ອງກັນຄວາມສະຫງົບແຂວງ ເຊກອງ ແລະ ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ໃນການຄົ້ນຄ້ວາກຳນົດແຜນການປັບປຸງ, ພັດທະນາສູນປິ່ນປົວ ແລະ ຟື້ນຟູສຸຂະພາບ ຂອງຜູ້ຕິດຢາເສບຕິດ ໃຫ້ມີຄວາມຮັບປະກັນແກ່ວຽກງານການປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ມີປະສິດທິພາບ ແລະ ປະສິດທິຜົນສູງ ເພື່ອເຮັດໃຫ້ຜູ້ຕິດຢາເສບຕິດທີ່ເຂົ້າຮັບການປິ່ນປົວໄດ້ກາຍເປັນພົນລະເມືອງດີກັບຄືນສູ່ສັງຄົມ.

ສຳລັບພາລະບົດບາດອັນລະອຽດ ຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ, ບັນດາໜ່ວຍງານທີ່ຂຶ້ນກັບ ແມ່ນໄດ້ກຳນົດໄວ້ ໃນຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ, ສະບັບເລກທີ 1193/ປກສ, ລົງວັນທີ 18 ກໍລະກົດ 2021.

**ມາດຕາ 9 ການປິ່ນປົວ.**

ການປິ່ນປົວຜູ້ຕິດຢາເສບຕິດແມ່ນການຮັກສາສຸຂະພາບຮ່າງກາຍ ຂອງຜູ້ຕິດຢາເສບຕິດດ້ວຍການໃຊ້ຢາຫຼວງ ຫຼື ຢາພື້ນເມືອງ, ດ້ວຍວິທີການບຳບັດໂດຍແພດ-ໝໍ, ຜູ້ມີຄວາມຮູ້ທາງດ້ານວິຊາສະເພາະແພດ, ມີປະສົບການ, ມີຄວາມສຳນິ-ສຳນານ ໃນການປິ່ນປົວ.

**ມາດຕາ 10 ການຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.**

ແມ່ນການເຮັດໃຫ້ຜູ້ຕິດຢາເສບຕິດ ທີ່ມາປິ່ນປົວຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບ ຜູ້ຕິດຢາເສບຕິດ ມີສຸຂະພາບຮ່າງກາຍແຂງແຮງສົມບູນດີ, ມີສຸຂະພາບຈິດໃຈທີ່ແຈ່ມໃສ, ມັນສະໝອງປອດໂປ່ງ ເປັນປົກກະຕິສາມາດຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຜົນຮ້າຍ ຂອງຢາເສບຕິດ ແລະ ປ່ຽນແປງພຶດຕິກຳ ຂອງຕົນເອງ ເພື່ອກັບມາເປັນພົນລະເມືອງດີ ຂອງສັງຄົມ.

## ໝວດທີ 3

## ການຄຸ້ມຄອງ-ນຳໃຊ້, ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ

**ມາດຕາ 11 ການຄຸ້ມຄອງ.**

ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ພາຍໃຕ້ການຄຸ້ມຄອງ ຂອງກອງບັນຊາການ ປກສ ແຂວງ, ອົງການຈັດຕັ້ງຂັ້ນແຂວງ ແລະ ກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 12 ການນຳໃຊ້.**

ແມ່ນນຳໃຊ້ເຂົ້າໃນວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ຂອງສັງຄົມ ໂດຍສະເພາະແມ່ນບັນຫາຢາເສບຕິດ, ເປັນສະຖານທີ່ໃຊ້ປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.

**ມາດຕາ 13 ຂອບເຂດ ຂອງ ສູນ.**

ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ມີຂອບເຂດ ທີ່ຕັ້ງຢູ່ ບ້ານທົ່ງຫວາຍ, ເມືອງທ່າແຕງ, ແຂວງເຊກອງ, ມີເນື້ອທີ່ທັງໝົດ 21.363 ຕາແມັດ.

**ມາດຕາ 14 ການປົກປັກຮັກສາ, ການບູລະນະສ້ອມແປງສູນ.**

ແມ່ນຄວາມຮັບຜິດຊອບໂດຍກົງ ຂອງຫ້ອງຕຳຫຼວດ ກອງບັນຊາການ ປກສ ແຂວງ ໃນການຄຸ້ມຄອງປົກປັກຮັກສາສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ, ການບູລະນະ-ສ້ອມແປງ ບົນພື້ນຖານ

ການກວດກາ ຂອງ ພະນັກງານປະຈຳສູນ, ຫ້ອງຕຳຫຼວດ, ຫ້ອງພະລາທິການ, ຫ້ອງການກອງບັນຊາການ ແລ້ວຂຶ້ນແຜນລ້ອມແປງ ພາກສ່ວນທີ່ເປ່ເພ ໂດຍການສະໜອງງົບປະມານ ໃນການບູລະນະລ້ອມແປງຈາກ ກອງບັນຊາການ ປກສ ແຂວງ ແລະ ອົງການປົກຄອງແຂວງ.

## ໝວດທີ 4

## ງົບປະມານ

**ມາດຕາ 15 ແຫຼ່ງທີ່ມາຂອງງົບປະມານ.**

1) ອັດຕາກິນ ຂອງຜູ້ເຂົ້າມາປິ່ນປົວຢູ່ສູນປິ່ນປົວ ຈາກຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ (ກຄສ) ກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ໂດຍປະຕິບັດຕາມໜັງສືແຈ້ງການ ສະບັບເລກທີ 1726/ກພສ, ລົງວັນທີ 11 ກໍລະກົດ 2025 ຂອງກົມໃຫຍ່ພະລາທິການ ກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການເພີ່ມອັດຕາກິນ ສຳລັບ ຜູ້ເຂົ້າຮັບການປິ່ນປົວ 300.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງເດືອນ;

2) ງົບປະມານ ໃນການບໍລິຫານ ຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ປະຈຳ 06 ເດືອນ ແລະ 1 ປີ ແມ່ນຈາກອຳນາດການປົກຄອງ ແຂວງເຊກອງ ຕາມການສະເໜີ ຂອງກອງບັນຊາການ ປກສ ແຂວງ;

3) ງົບປະມານໃນການພັດທະນາພື້ນຖານໂຄງລ່າງ ຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດຈາກກະຊວງປ້ອງກັນຄວາມສະຫງົບ, ສົມທົບກັບງົບປະມານຈາກອຳນາດການປົກຄອງ ແຂວງເຊກອງ.

**ມາດຕາ 16 ງົບປະມານການປະກອບສ່ວນ ຂອງຜູ້ປົກຄອງ.**

ປະຕິບັດຕາມຄຳແນະນຳ ສະບັບເລກທີ 1228/ປກສ, ລົງວັນທີ 19 ກໍລະກົດ 2021 ຂອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການຄຸ້ມຄອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດກຳນົດເວລາໃນການເຂົ້າມາປິ່ນປົວ ຂອງຜູ້ຕິດຢາເສບຕິດ ຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ແມ່ນ 06 ເດືອນ ເຊິ່ງພໍ່ແມ່ຜູ້ປົກຄອງຕ້ອງໄດ້ປະກອບສ່ວນທາງດ້ານງົບປະມານດັ່ງນີ້:

| | |
|---|---|
| 1) ຄ່າຢາປິ່ນປົວ | ຈຳນວນ: 750.000 ກີບ, ຕໍ່ຄົນ, ຕໍ່ຄັ້ງ (ໄລຍະ 6 ເດືອນ); |
| 2) ອັດຕາກິນ | ຈຳນວນ: 900.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງເດືອນ; |
| 3) ຄ່າບູລະນະສູນ | ຈຳນວນ: 200.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງຄັ້ງ; |
| 4) ຄ່າກິດຈະກຳ | ຈຳນວນ: 200.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງຄັ້ງ; |
| 5) ຄ່າເຄື່ອງນຸ່ງ | ຈຳນວນ: 120.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງຄັ້ງ; |
| 6) ຄ່າເອກະສານຕ່າງໆ | ຈຳນວນ: 55.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງຄັ້ງ; |
| 7) ຄ່ານ້ຳຢາກວດສານເສບຕິດ | ຈຳນວນ: 70.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງຄັ້ງ; |

8) ຄ່າຕັດຜົມ ຈຳນວນ: 20.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງເດືອນ = 120.000 ກີບ, ຕໍ່ໜຶ່ງຄັ້ງ.

**ໝາຍເຫດ:** ຖ້າຫາກຜູ້ຕິດຢາເສບຕິດ ທີ່ເຂົ້າມາປິ່ນປົວຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດຄົບຕາມກຳນົດ 06 ເດືອນແລ້ວ ແຕ່ຍັງບໍ່ຫາຍຂາດ ຕ້ອງສືບຕໍ່ປິ່ນປົວຕື່ມອີກ, ຜູ້ປົກຄອງຈະໄດ້ໃຊ້ຈ່າຍແຕ່ອັດຕາກິນ ຈຳນວນ: 900.000 ກີບ, ຕໍ່ຄົນ, ຕໍ່ໜຶ່ງເດືອນ, ສ່ວນຄ່າໃຊ້ຈ່າຍອື່ນໆຈະບໍ່ໄດ້ຈ່າຍຕື່ມອີກ.

- ສຳລັບຜູ້ຕິດຢາເສບຕິດທີ່ທຸກຍາກ, ອານາຖາ, ກຳພ້າ-ກຳພອຍ, ໂດຍໄດ້ຮັບການຢັ້ງຢືນ ຈາກອຳນາດການປົກຄອງບ້ານ, ຜ່ານການກວດກາສະພາບຄອບຄົວຕົວຈິງ ຈາກເຈົ້າໜ້າທີ່ສູນປິ່ນປົວ ແລະ ຟື້ນ

ຟູສຸຂະພາບຜູ້ຕິດຢາເສບຕິດ, ຈະໄດ້ຮັບນະໂຍບາຍ ໃນການປະກອບສ່ວນທາງດ້ານງົບປະມານໃນການປິ່ນປົວຢູ່ສູນໂດຍການຄົ້ນຄ້ວາ ຂອງຄະນະກຳມະການ.

**ມາດຕາ 17 ການມີສ່ວນຮ່ວມ, ປະກອບສ່ວນຂອງສັງຄົມ.**

ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ແຂວງເຊກອງ ແມ່ນຮັບໃຊ້ທຸກຊັ້ນຄົນ, ທຸກພາກສ່ວນການຈັດຕັ້ງລັດ, ປະຊາຊົນບັນດາເຜົ່າທົ່ວແຂວງເຊກອງ ແລະ ແຂວງໃກ້ຄຽງ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທາງສັງຄົມ, ບໍລິສັດ, ຫ້າງຮ້ານຕ່າງໆ ຕ້ອງໄດ້ມີການປະກອບສ່ວນທາງດ້ານງົບປະມານ, ວັດຖຸອຸປະກອນເຂົ້າ ໃນການພັດທະນາສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ແຂວງ ເຊກອງ ໃຫ້ມີຄວາມທັນສະໄໝ ແລະ ມີຄຸນນະພາບສູງ.

**ມາດຕາ 18 ການຄຸ້ມຄອງນຳໃຊ້ງົບປະມານ.**

ການຄຸ້ມຄອງງົບປະມານ ແມ່ນການຈັດຕັ້ງທີ່ປະຈຳຢູ່ສູນ, ຫ້ອງຕຳຫຼວດ, ກອງບັນຊາການ ປກສ ແຂວງ ແລະ ຄະນະກຳມະການ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍທ່ານເຈົ້າແຂວງ, ການນຳໃຊ້ງົບປະມານ ນຳໃຊ້ເຂົ້າໃນອັດຕາກິນປະຈຳວັນ ຂອງຜູ້ທີ່ເຂົ້າມາປິ່ນປົວຢູ່ສູນ, ນຳໃຊ້ເຂົ້າໃນການບໍລິຫານວຽກງານຕ່າງໆ ຂອງສູນ ແລະ ການບູລະນະ-ສ້ອມແປງສູນ.

## ໝວດທີ 5

## ຄະນະກຳມະການຄຸ້ມຄອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.

**ມາດຕາ 19 ຄະນະກຳມະການຄຸ້ມຄອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ**

ແມ່ນອົງການຈັດຕັ້ງລັດ ເຊິ່ງປະກອບ ມີດັ່ງນີ້:

1) ຫ້ອງວ່າການແຂວງ;
2) ພະແນກການເງິນແຂວງ;
3) ພະແນກສາທາລະນະສຸກແຂວງ;
4) ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມແຂວງ;
5) ພະແນກສຶກສາທິການ ແລະ ກິລາແຂວງ;
6) ອົງການຈັດຕັ້ງມະຫາຊົນ.

**ມາດຕາ 20 ພາລະບົດບາດຂອງຄະນະກຳມະການ.**

**1. ຫ້ອງວ່າການແຂວງ.**

ເປັນເສນາທິການແກ່ອົງການປົກຄອງແຂວງໃນການລາຍງານ ແລະ ຂໍຄຳເຫັນ ນຳທ່ານເຈົ້າແຂວງ ກ່ຽວກັບ ແຜນວຽກ - ແຜນການເຄື່ອນໄຫວ, ແຜນງົບປະມານ ຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

ປະສານສົມທົບ ກັບ ພະແນກການທີ່ກ່ຽວຂ້ອງ ໃນການຕິດຕາມ, ຊຸກຍູ້, ການຈັດຕັ້ງປະຕິບັດຂໍ້ຕົກລົງ ຂອງ ທ່ານ ເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ, ນຳໃຊ້ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ແຂວງ ເຊກອງ.

**2. ພະແນກການເງິນແຂວງ.**

ຄົ້ນຄ້ວາ, ຈັດສັນງົບປະມານ ສະເໜີການນຳຂັ້ນແຂວງ ເປັນຜູ້ອະນຸມັດ ໃຫ້ແກ່ວຽກງານແກ້ໄຂຢາເສບຕິດ ໂດຍສະເພາະ ຂອງ ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ແຂວງເຊກອງ;

ສະໜອງງົບປະມານ ຕາມລະບຽບ ຂອງ ການເງິນເພື່ອຮອງຮັບການພັດທະນາພື້ນຖານໂຄງລ່າງຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.

**3. ພະແນກສາທາລະນະສຸກແຂວງ.**

ຄົ້ນຄ້ວາວິທີການ ໃນການປິ່ນປົວຜູ້ຕິດຢາເສບຕິດຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຢູ່ແຂວງເຊກອງ;

ປະກອບພະນັກງານແພດ-ໝໍ, ຜູ້ທີ່ມີຄວາມຊຳນິຊຳນານ ໃນການປິ່ນປົວ 5-7 ຄົນ ໃຫ້ແກ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

ຕອບສະໜອງຢາ ແລະ ອຸປະກອນການແພດໃຫ້ແກ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

**4. ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມແຂວງ.**

ຈັດຝຶກອົບຮົມ, ບຳລຸງ, ຍົກລະດັບ ໃຫ້ພະນັກງານເພື່ອສ້າງເປັນຄູຝຶກກ່ຽວກັບວິຊາຊີບ ທີ່ຈຳເປັນໃຫ້ແກ່ຜູ້ອອກຢາເສບຕິດ;

ປະສານສົມທົບກັບລັດວິສາຫະກິດ, ໂຮງງານຕ່າງໆ ເພື່ອຈັດຫາວຽກເຮັດງານທຳ ພ້ອມທັງໃຫ້ຄຳປຶກສາ ແລະ ສ້າງເງື່ອນໄຂຊ່ວຍເຫຼືອຜູ້ອອກຢາເສບຕິດ ໃຫ້ເຂົາເຈົ້າກັບຄືນສູ່ສັງຄົມ, ຄອບຄົວ ແລະ ຕິດ ຕາມບໍ່ໃຫ້ຜູ້ທີ່ປິ່ນປົວຫາຍດີແລ້ວ ກັບຄືນມາຕິດຢາເສບຕິດອີກເທື່ອໃໝ່;

ຊອກແຫຼ່ງທຶນສັງຄົມ-ສົງເຄາະ ເພື່ອຊ່ວຍເຫຼືອດ້ານວັດຖຸ ໃຫ້ແກ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.

**5. ພະແນກສຶກສາທິການ ແລະ ກິລາແຂວງ.**

ໂຄສະນາ, ສຶກສາອົບຮົມ ຜູ້ຕິດຢາເສບຕິດ ທີ່ເຂົ້າມາປິ່ນປົວຢູ່ສູນ ໃຫ້ຮັບຮູ້ ແລະ ເຂົ້າໃຈແຈ້ງ ຕໍ່ຜົນຮ້າຍຄວາມເປັນໄພອັນຕະລາຍ ຂອງຢາເສບຕິດທຸກປະເພດຕໍ່ຕົນເອງ, ຕໍ່ຄອບຄົວ, ຕໍ່ສັງຄົມກໍ່ຄືປະເທດຊາດ, ນຳໃຊ້ການອອກກຳລັງກາຍ, ການຫຼິ້ນກິລາກາຍະກຳ ເພື່ອບຳບັດ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ສ້າງເງື່ອນໄຂໃຫ້ຜູ້ຕິດຢາເສບຕິດ ທີ່ປິ່ນປົວດີແລ້ວ ໄດ້ມີວິຊາອາຊີບຕິດຕົວ ໂດຍການສົມທົບກັບໂຮງຮຽນວິຊາຊີບ ຂອງແຂວງ ເພື່ອຝຶກວິຊາຊີບໃຫ້ແກ່ຜູ້ອອກຢາເສບຕິດໄດ້ມີວຽກເຮັດງານທຳ.

**6. ອົງການຈັດຕັ້ງມະຫາຊົນ.**

ເປັນເຈົ້າການສຶກສາອົບຮົມ ໃນການໂຄສະນາຜົນຮ້າຍ ຂອງ ສິ່ງເສບຕິດໃຫ້ແກ່ຜູ້ຕົກເປັນທາດຂອງຢາເສບຕິດຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

ນຳເອົາອົງການພຸດທະສາສະໜາມາບຳບັດ ແນວຄິດຈິດໃຈ ເພື່ອໃຫ້ຜູ້ຕິດຢາເສບຕິດ ໄດ້ຮູ້ຈັກບາບບຸນຄຸນໂທດ ແລະ ມີຄວາມກິນແໜງແຄງໃຈຕໍ່ການກະທຳຜິດຂອງຜູ້ຕິດຢາເສບຕິດ;

ເປັນເຈົ້າການ ໃນການຝຶກອົບຮົມວິຊາຊີບ ແລະ ຊອກວຽກເຮັດງານທຳ ໃຫ້ແກ່ຜູ້ອອກຢາເສບຕິດ ໂດຍສະເພາະແມ່ນອົງການຈັດຕັ້ງຊາວໜຸ່ມ, ແມ່ຍິງ, ກຳມະບານ.

## ໝວດທີ 6

## ອົງການຈັດຕັ້ງຄຸ້ມຄອງສູນ

**ມາດຕາ 21 ອົງການການຈັດຕັ້ງຄຸ້ມຄອງສູນ.**

ການຈັດຕັ້ງຄຸ້ມຄອງສູນ ແມ່ນອົງການປົກຄອງແຂວງ ເຊິ່ງປະກອບ ມີດັ່ງນີ້:

1) ກອງບັນຊາການ ປກສ ແຂວງ.
2) ກອງບັນຊາການ ປກສ ເມືອງ.
3) ອົງການປົກຄອງບ້ານ.

**ມາດຕາ 22 ກອງບັນຊາການ ປກສ ແຂວງ.**

ມີຄວາມຮັບຜິດຊອບໂດຍກົງ ໃນການຄຸ້ມຄອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ການນຳພາ-ຊີ້ນຳກົງຈັກການຈັດຕັ້ງຂອງສູນ, ການຕິດຕາມກວດກາ, ການແຕ່ງຕັ້ງຍົກຍ້າຍ, ການປະຕິບັດນະໂຍບາຍ, ການປະຕິບັດວິໃນຕໍ່ນາຍ ແລະ ພົນຕຳຫຼວດ ທີ່ປະຕິບັດໜ້າທີ່ຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ.

**ມາດຕາ 23 ກອງບັນຊາການ ປກສ ເມືອງ.**

ຊີ້ນຳ ປກສ ກຸ່ມບ້ານ, ອຳນາດການປົກຄອງບ້ານ, ສັງລວມສະຖິຕິ, ຂຶ້ນບັນຊີເປົ້າໝາຍ ຜູ້ຕິດຢາເສບຕິດ ໃນຂອບເຂດຄວາມຮັບຜິດຊອບ ຂອງ ຕົນ, ປຸກລະດົມຂົນຂວາຍຜູ້ປົກຄອງ ຂອງ ຜູ້ຕິດຢາເສບຕິດ ໃຫ້ນຳເອົາລູກຫຼານຂອງຕົນເຂົ້າມາປິ່ນປົວ ແລະ ຟື້ນຟູສຸຂະພາບຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

ຕິດຕາມຜູ້ມາປິ່ນປົວ ຄົບຕາມກຳນົດແລ້ວ ແລະ ອອກຈາກສູນ ໄປຢູ່ຊຸມຊົນ ຂອງ ຕົນເອງ ບໍ່ໃຫ້ກັບຄືນມາຕິດຢາເສບຕິດອີກ.

**ມາດຕາ 24 ອົງການປົກຄອງບ້ານ.**

ເຜີຍແຜ່, ເຊື່ອມຊຶມລະບຽບກົດໝາຍ, ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ພົນລະເມືອງທຸກຊັ້ນຄົນພາຍໃນບ້ານ ຂອງຕົນໃຫ້ຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບຜົນຮ້າຍຂອງຢາເສບຕິດ;

ໃຫ້ຂໍ້ມູນຕໍ່ເຈົ້າໜ້າທີ່ ແລະ ເປັນເຈົ້າການ ໃນການຂຶ້ນບັນຊີເປົ້າໝາຍຜູ້ເສບຢາເສບຕິດ, ປຸກລະດົມຂົນຂວາຍຜູ້ຕິດຢາເສບຕິດ ໃຫ້ສະໝັກໃຈເຂົ້າມາປິ່ນປົວ ແລະ ຟື້ນຟູສຸຂະພາບ ຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

ຕິດຕາມຜູ້ມາປິ່ນປົວ ຄົບຕາມກຳນົດແລ້ວ ແລະ ອອກຈາກສູນ ໄປຢູ່ຊຸມຊົນ ຂອງຕົນເອງ ບໍ່ໃຫ້ກັບຄືນມາຕິດຢາເສບຕິດອີກ.

## ໝວດທີ 7

## ຂໍ້ຫ້າມ

**ມາດຕາ 25 ສຳລັບການຈັດຕັ້ງ.**

1) ການຈັດຕັ້ງທີ່ຮັບຜິດຊອບເຄື່ອນໄຫວຜິດຕໍ່ລະບຽບກົດໝາຍ ແລະ ຂັດກັບຂໍ້ຕົກລົງສະບັບນີ້ເດັດຂາດ;

2) ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຍັກຍອກ, ສໍ້ໂກງ, ຊອກຫາຜົນປະໂຫຍດໃຫ້ຕົນເອງທີ່ສ້າງຄວາມເສຍຫາຍຕໍ່ຜູ້ອື່ນ;

3) ທວງເອົາ, ຂໍເອົາ, ຮັບສິນບົນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

4) ປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່;

5) ຮຽກເອົາຄ່າທຳນຽມ, ຄ່າບໍລິການ, ທີ່ຜິດຕໍ່ລະບຽບກົດໝາຍ.

**ມາດຕາ 26 ສຳລັບຜູ້ປົກຄອງ.**

1) ບໍ່ໃຫ້ຜູ້ປົກຄອງລະເມີດຕໍ່ລະບຽບກົດໝາຍ ຫຼື ລະບຽບຫຼັກການ ຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

2) ບໍ່ໃຫ້ຜູ້ປົກຄອງນຳເອົາເຄື່ອງກິນ, ເຄື່ອງໃຊ້ມາໃຫ້ລູກຫຼານທີ່ປິ່ນປົວຢູ່ສູນ ໂດຍບໍ່ຜ່ານເຈົ້າໜ້າທີ່ຮັບຜິດຊອບ;

3) ບໍ່ໃຫ້ຜູ້ປົກຄອງ ເຂົ້າມາພົວພັນເອົາລູກ-ຫຼານ, ຍາດຕິພີ່ນ້ອງ ຂອງຕົນ ທີ່ມາປິ່ນປົວຢູ່ສູນປິ່ນປົວອອກກ່ອນກຳນົດໂດຍບໍ່ມີຄວາມຈຳເປັນ;

4) ໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ, ເພື່ອເອົາລູກ-ຫຼານ ຂອງຕົນອອກຈາກສູນປິ່ນປົວກ່ອນຄົບກຳນົດເດັດຂາດ.

**ມາດຕາ 27 ສຳລັບບຸກຄົນທົ່ວໄປ.**

1) ເຂົ້າມາພົວພັນວຽກ ພາຍໃນສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຕ້ອງໄດ້ເຄົາລົບແລະ ປະຕິບັດລະບຽບຫຼັກການ ຂອງສູນຢ່າງເຄັ່ງຄັດ;

2) ຊຸກເຊື່ອງເອົາວັດຖຸທີ່ເປັນເຫຼັກແຂງ, ຂອງມີຄົມ (ມີດ-ພ້າ), ທາດລະເບີດ, ທາດເບື່ອ, ເຫຼົ້າ, ເບຍ ແລະ ສິ່ງເສບຕິດທຸກປະເພດ ເຂົ້າມາໃຫ້ຜູ້ທີ່ປິ່ນປົວຢູ່ສູນຢ່າງເດັດຂາດ;

3) ເຄື່ອນໄຫວໂຈມຕີ, ໃສ່ຮ້າຍປ້າຍສີ ໃນທາງທີ່ບໍ່ດີ ເຮັດໃຫ້ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດເຊື່ອມເສຍ;

4) ສວຍໃຊ້ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ເພື່ອຫາຜົນປະໂຫຍດ ໃຫ້ຕົນເອງຢ່າງຜິດກົດໝາຍ.

**ມາດຕາ 28 ສຳລັບຜູ້ເຂົ້າປິ່ນປົວ.**

1) ລະເມີດຕໍ່ລະບຽບກົດໝາຍ ຫຼື ລະເມີດກົດລະບຽບຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ວາງອອກໂດຍເດັດຂາດ;

2) ໃຊ້ສຽງດັງ, ຜິດຖຽງກັນ, ອາລະວາດຕີກັນ ຫຼື ສ້າງຄວາມບໍ່ສະຫງົບພາຍໃນສູນ;

3) ມ້າງເພທຳລາຍອາຄານ, ສະຖານທີ່ພັກ, ລະບົບໄຟຟ້າ-ນ້ຳປະປາ, ອຸປະກອນຮັບໃຊ້ພາຍໃນສູນ;

4) ໃຊ້ກຳລັງທຳລາຍເຈົ້າໜ້າທີ່ ຫຼື ເຕັ້ນໂຕນໂຍນໜີອອກຈາກສູນ;

5) ເວົ້າຈາບໍ່ສຸພາບຕໍ່ເຈົ້າໜ້າທີ່ຂອງສູນ, ຕໍ່ພໍ່ແມ່ຜູ້ປົກຄອງ, ຍາດຕິພີ່ນ້ອງທີ່ມາຢ້ຽມຢາມ;

6) ນຳເອົາວັດຖຸສິ່ງຂອງທີ່ຕ້ອງຫ້າມ, ສານເສບຕິດທຸກປະເພດ ເຂົ້າມາໃນສູນຕາມ ມາດຕາ 27 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 8

## ອົງການຕິດຕາມກວດກາ

**ມາດຕາ 29 ອົງການຕິດຕາມກວດກາ.**

1) ອົງການຕິດຕາມກວດກາພາຍໃນ ແມ່ນອົງການດຽວກັນກັບ ຄະນະກຳມະການຄຸ້ມຄອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ເຊິ່ງປະກອບມີ: ກອງບັນຊາການ ປກສ ແຂວງ, ກອງບັນຊາການ ປ ກສ ເມືອງ ແລະ ອົງການປົກຄອງບ້ານ;

2) ອົງການກວດກາພາຍນອກ ປະກອບມີ: ສະພາປະຊາຊົນແຂວງ, ກວດກາລັດ, ອົງການກວດສອບປະຈຳພາກໃຕ້, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ສື່ມວນຊົນ.

**ມາດຕາ 30 ເນື້ອໃນການກວດກາ.**

1) ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ;

2) ລາຍຮັບ-ລາຍຈ່າຍຂອງສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ;

3) ການຈັດຕັ້ງປະຕິບັດໜ້າທີ່ຂອງພະນັກງານປະຈຳສູນປິ່ນປົວ;

4) ຄຳຮ້ອງ, ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

**ມາດຕາ 31 ຮູບແບບການກວດກາ**

1) ກວດກາປົກກະຕິ ແມ່ນກວດກາຕາມແຜນການ ທົກເດືອນ ແລະ ປະຈຳປີ;

2) ກວດກາຕາມການສະເໜີ ຫຼື ການຮ້ອງຂໍ ໂດຍມີການແຈ້ງ ໃຫ້ຮູ້ລ່ວງໜ້າ ແມ່ນການກວດກາຕາມແຜນປົກກະຕິ ແຕ່ມີການແຈ້ງໃຫ້ເປົ້າໝາຍກວດກາ ຊາບລ່ວງໜ້າກ່ອນ;

3) ກວດກາໃນກໍລະນີສຸກເສີນແມ່ນການກວດກາອັນຮີບດ່ວນ ແລະ ບໍ່ຢູ່ໃນແຜນການ.

## ໝວດທີ 9

## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 32 ຮູບແບບການແກ້ໄຂຂໍ້ຂັດແຍ່ງ.**

ຂໍ້ຂັດແຍ່ງເກີດຂຶ້ນຈາກການລະເມີດສິດ ແລະ ພັນທະ ຂອງ ແຕ່ລະພາກສ່ວນ ຈະໄດ້ຮັບການແກ້ໄຂໃນ 3 ຮູບແບບຄື:

1) ການໄກ່ເກ່ຍ;

2) ການແກ້ໄຂທາງບໍລິຫານ;

3) ການແກ້ໄຂດ້ວຍການຕັດສິນ ຂອງສານ.

**ມາດຕາ 33 ການໄກ່ເກ່ຍ.**

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ແຕ່ຜົນເສຍຫາຍບໍ່ຮ້າຍແຮງ ເຊິ່ງບໍ່ຈຳເປັນເຖິງຂັ້ນດຳເນີນຄະດີຕາມກົດໝາຍ ພາກສ່ວນກ່ຽວຂ້ອງ ທີ່ຮັບຜິດຊອບຮ່ວມກັນ ຈະໄດ້ໄກ່ເກ່ຍດ້ວຍການສຶກສາອົບຮົມ,

ປະນີປະນອມ ອີງໃສ່ຂໍ້ມູນຫຼັກຖານ ໂດຍມີການຈັດຕັ້ງບ້ານ, ຄອບຄົວເຂົ້າຮ່ວມ, ການໄກ່ເກ່ຍຕ້ອງຮັບປະກັນຄວາມເປັນກາງ ແລະ ຍຸຕິທຳ.

**ມາດຕາ 34 ການແກ້ໄຂທາງບໍລິຫານ.**

ຂໍ້ຂັດແຍ່ງທີ່ເກີດຂຶ້ນ ຈາກການລະເມີດກົດໝາຍ ທີ່ມີຜົນເສຍຫາຍບໍ່ເປັນອັນຕະລາຍຮ້າຍແຮງສາມາດ ແກ້ໄຂໃຫ້ມີຄວາມຮັບຜິດຊອບໃຊ້ແທນຄ່າເສຍຫາຍທາງແພ່ງ ພ້ອມທັງສຶກສາອົບຮົມ ກ່າວເຕືອນ ໂດຍແມ່ນການຈັດຕັ້ງທີ່ກ່ຽວຂ້ອງແກ້ໄຂ.

**ມາດຕາ 35 ການແກ້ໄຂດ້ວຍການຕັດສິນຂອງສານ.**

ຂໍ້ຂັດແຍ່ງທີ່ເກີດຂຶ້ນ ໃນກໍລະນີຫາກມີຜົນເສຍຫາຍຫຼາຍ ຫຼື ຮ້າຍແຮງ ບໍ່ສາມາດແກ້ໄຂຕາມມາດຕາ 33, 34 ແມ່ນໃຫ້ດຳເນີນຄະດີຕາມຂະບວນການຍຸຕິທຳ.

## ໝວດທີ 10

## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນເຂົ້າໃນການພັດທະນາສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ຈະໄດ້ຮັບການຍ້ອງຍໍຕາມລະບຽບການ.

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນລົງວິໃນປັບໄໝ ຫຼື ຖືກລົງໂທດຕາມກົດໝາຍ.

## ໝວດທີ 11

## ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ.**

ຄະນະກຳມະການແກ້ໄຂບັນຫາຢາເສບຕິດ ແລະ ກອງເລຂາປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນ ແລະ ລາຍງານສະພາບການເຄື່ອນໄຫວ ຂອງ ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ ໃຫ້ຂັ້ນເທິງຊາບຢ່າງໜ້ອຍປີລະ 2 ຄັ້ງ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ,

**ມາດຕາ 39 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນ ແລະ ລົງໃນຈົດໝາຍເຫດທາງລັດຖະການສາມສິບວັນເປັນຕົ້ນໄປ.

ຮັກສາການແທນ ເຈົ້າແຂວງ

ບຸນຫຼາຍ ບຸດທີ